

# ທີ່ພັກອາໄສ ທີ່ເປັນທັມ

## ໂອກາດທີ່ເທົ່າທຽມກັນສຳລັບທຸກຄົນ



**ກະຊວງດູແລທີ່ພັກອາໄສ ແລະການພັດທະນາເຂດເມືອງແຫ່ງສະຫະຣັຖອາເມລິກາ**
ຫ້ອງການດູແລທີ່ພັກອາໄສທີ່ເປັນທັມແລະການມີໂອກາດທີ່ເທົ່າທຽມກັນ

ກະຣຸນາຢ້ຽມຊົມເວັບໄຊຂອງພວກເຮົາ: www.HUD.gov/fairhousing
Lao Version





# ທີ່ພັກອາໄສທີ່ເປັນທັມ - ການມີໂອກາດທີ່ເທົ່າທຽມກັນສໍາລັບທຸກຄົນ

ອາເມລິກາ, ໃນທຸກໆ ທາງ, ໃຫ້ໂອກາດທີ່ເທົ່າທຽມກັນແກ່ທຸກຄົນ. ຄວາມຫຼາກຫຼາຍຂອງປະຊາຊົນ ແລະຄວາມເປັນອັນໜຶ່ງອັນດຽວກັນນັ້ນເອງທີ່ໄດ້ຜູກມັດພວກເຮົາໄວ້ຊຶ່ງເປັນເອກະລັກສະແດງເຖິງຫຼັກການແຫ່ງອິດສະຫຼະພາບ ແລະຄວາມຍຸດຕິທັມຊຶ່ງເປັນຮາກຖານຂອງປະເທດນີ້. ນີ້ກໍ່ແມ່ນເຫດຜົນວ່າເປັນຫຍັງຈຶ່ງເປັນຕາຫ່ວງຢ່າງຍິ່ງເມື່ອຜູ້ອົບພະຍົບລາຍໃໝ່, ຊົນກຸ່ມນ້ອຍ, ບັນດາຄອບຄົວທີ່ມີລູກ, ແລະບຸກຄົນທີ່ພິການ ຖືກປະຕິເສດດ້ານທີ່ພັກອາໄສທີ່ເຂົາເຈົ້າເລືອກ ຍ້ອນການຈໍາແນກທີ່ຜິດກົດໝາຍ.

ກະຊວງດູແລທີ່ພັກອາໄສແລະການພັດທະນາເຂດເມືອງ (Department of Housing and Urban Development: HUD) ບັງຄັບໃຊ້ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ (Fair Housing Act), ຊຶ່ງຫ້າມບໍ່ໃຫ້ມີການຈໍາແນກ ແລະການຂົ່ມຂູ່ບຸກຄົນໃນເຮືອນຂອງເຂົາເຈົ້າ, ໃນຕຶກອາພາດເມັນ, ແລະ ຄອນໂດມິນຽມ - ໃນເກືອບທຸກການດໍາເນີນການດ້ານທີ່ພັກອາໄສທັງໝົດ, ລວມເຖິງ ເຮືອນເຊົ່າ ແລະການຂາຍເຮືອນ ແລະຂໍ້ກໍານົດດ້ານເງິນກູ້ຈໍານອງບ້ານ.

ການເຂົ້າເຖິງໂອກາດທີ່ເທົ່າທຽມກັນໃນການເຊົ່າເຮືອນແລະການເປັນເຈົ້າຂອງເຮືອນແມ່ນຫົວໃຈສໍາຄັນຂອງນະໂຍບາຍດ້ານທີ່ພັກອາໄສຂອງຣັຖບານກາງຂອງປະເທດນີ້ຜູ້ໃຫ້ບໍລິການດ້ານທີ່ພັກອາໄສ ທີ່ປະຕິເສດທີ່ຈະໃຫ້ເຊົ່າ ຫຼື ຂາຍເຮືອນໃຫ້ແກ່ບຸກຄົນໂດຍອີງໃສເຊື້ອຊາດ, ສີຜິວ, ຊາດກໍາເນີດ, ສາສະໜາ, ເພດ, ສະຖານະທາງຄອບຄົວ, ຫຼື ຄວາມພິການແມ່ນກໍາລັງລະເມີດກົດໝາຍຂອງຣັຖບານ ກາງ, ແລະ HUD ຈະຊອກຫາການບັງຄັບໃຊ້ວິທີການລົງໂທດຕໍ່ເຂົາເຈົ້າຢ່າງເຂັ້ມງວດ.

ການຈໍາແນກດ້ານທີ່ພັກອາໄສບໍ່ພຽງແຕ່ຜິດກົດໝາຍເທົ່ານັ້ນ, ແຕ່ຍັງຂັດແຍ້ງຕໍ່ຫຼັກການຄວາມເປັນອິດສະຫຼະພາບໃນທຸກທາງ ແລະໂອກາດ ທີ່ພວກເຮົາໄດ້ສະຫງວນຮັກສາໄວ້ໃນຖານະເປັນຊາວອາເມລິກັນ. HUD ຍຶດໝັ້ນຮັບປະກັນວ່າ ທຸກຄົນຈະໄດ້ຮັບການປະຕິບັດຕໍ່ດ້ວຍຄວາມເທົ່າທຽມກັນ ເມື່ອເວລາຊອກຫາສະຖານທີ່ຊຶ່ງເອີ້ນວ່າ ເຮືອນ.

## ສາລະບານ

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ........ 1
ທີ່ພັກອາໄສຄອບຄຸມຫຍັງແດ່? ........ 1
ມີຫຍັງແດ່ທີ່ຖືກຫ້າມ? ........ 1
ການປົກປ້ອງເພີ່ມເຕີມ ຖ້າຫາກ ທ່ານພິການ ........ 3
ການປົກປ້ອງດ້ານທີ່ພັກອາໄສສໍາລັບຄອບຄົວທີ່ມີລູກ ........ 4
ຖ້າວ່າ ທ່ານຄິດວ່າສິດທິຂອງທ່ານຖືກລະເມີດ ........ 6
ຈະເກີດຫຍັງຂຶ້ນ ເມື່ອທ່ານຍື່ນຄໍາຮ້ອງທຸກ? ........ 10
ຈະເກີດຫຍັງຂຶ້ນ ຖ້າວ່າ ຂ້າພະເຈົ້າກໍາລັງຈະສູນເສັຽທີ່ພັກອາໄສຂອງຂ້າພະເຈົ້າເນື່ອງຈາກການຖືກຂັບໄລ່ ຫຼື ການຂາຍ? ........ 11
ຈະເກີດຫຍັງຂຶ້ນ ຫຼັງຈາກມີການສືບສວນຄໍາຮ້ອງທຸກ? ........ 11
ເພີ່ມເຕີມ ........ 13

**U.S. Department of Housing and Urban Development** (HUD)
451 7th **Street, S.W., Washington, D.C.** 20410-2000







## ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ຫ້າມການຈຳແນກໃນດ້ານທີ່ພັກອາໄສ ອັນເນື່ອງມາຈາກ:

- ເຊື້ອຊາດ ຫຼື ສີຜິວ
- ສາສະໜາ
- ເພດ
- ຄວາມພິການ
- ສະຖານະທາງຄອບຄົວ (ລວມເຖິງ ເດັກທີ່ອາຍຸຕ່ຳກວ່າ 18 ປີທີ່ອາໄສຢູ່ກັບພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍ; ຜູ້ຍິງຖືພາ ແລະ ບຸກຄົນທີ່ຄຸ້ມຄອງດູແລເດັກອາຍຸຕ່ຳກວ່າ 18 ປີ)
- ຊາດກຳເນີດ

## ທີ່ພັກອາໄສຄອບຄຸມຫຍັງແດ່?

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ຄອບຄຸມເຖິງທີ່ພັກອາໄສສ່ວນຫຼາຍ. ໃນບາງກໍລະນີ, ກົດໝາຍຍົກເວັ້ນໃຫ້ແກ່ຕຶກອາຄານ ທີ່ມີເຈົ້າຂອງອາໄສຢູ່ໃນຕຶກນັ້ນ ໂດຍບໍ່ໃຫ້ມີຫ້ອງພັກກາຍສີ່ຫ້ອງ, ທີ່ພັກສຳລັບຄອບຄົວດ່ຽວທີ່ຂາຍໃຫ້ຫຼືໃຫ້ເຊົ່າໂດຍບໍ່ມີນາຍໜ້າ ແລະລະບົບທີ່ພັກອາໄສທີ່ດຳເນີນການໂດຍອົງການ ແລະສະມາຄົມເອກະຊົນ ຊຶ່ງຈຳກັດການເຂົ້າພັກອາໄສໃຫ້ແກ່ສະມາຊິກ.

## ມີຫຍັງແດ່ທີ່ຖືກຫ້າມ?

**ໃນການຂາຍ ແລະເຊົ່າທີ່ພັກອາໄສ:** ບໍ່ມີໃຜສາມາດປະຕິບັດສິ່ງໃດໜຶ່ງຕໍ່ໄປນີ້ ໂດຍອີງໃສ່ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມພິການ, ສະຖານະທາງຄອບຄົວ, ຫຼື ຊາດກຳເນີດ:

- ປະຕິເສດທີ່ຈະໃຫ້ເຊົ່າ ຫຼື ຂາຍເຮືອນ
- ປະຕິເສດທີ່ຈະຕໍ່ລອງເອົາເຮືອນ
- ເຮັດໃຫ້ທີ່ພັກບໍ່ຫວ່າງ
- ບໍ່ດັ່ງນັ້ນ ກໍປະຕິເສດການເຂົ້າຢູ່ອາໄສ
- ຕັ້ງເງື່ອນໄຂ, ຂໍ້ກຳນົດ ຫຼື ສິດພິເສດແຕກຕ່າງກັນ ສຳລັບການຂາຍ ຫຼື ການເຊົ່າເຮືອນ
- ຈັດຫາບໍລິການທີ່ພັກ ຫຼື ການອຳນວຍຄວາມສະດວກທີ່ແຕກຕ່າງກັນ
- ປະຕິເສດແບບຜິດໆ ວ່າມີທີ່ພັກອາໄສພ້ອມໃຫ້ກວດສອບ, ຂາຍ ຫຼື ເຊົ່າ
- ເພື່ອຫວັງກຳໄລ, ຊັກຊວນ, ຫຼື ພະຍາຍາມຊັກຊວນເຈົ້າຂອງທີ່ພັກໃຫ້ຂາຍຫຼືເຊົ່າໂດຍເວົ້າແນະນຳວ່າມີກຸ່ມຄົນທີ່ມີເຊື້ອຊາດສະເພາະໄດ້ຍ້າຍ, ຫຼືກຳລັງ





ຈະຍ້າຍເຂົ້າໄປຢູ່ໃນເຂດເພື່ອນບ້ານຂອງທ່ານ (ກໍາລັງນິຍົມຍ້າຍເຂົ້າມາຢູ່) ຫຼື

- ປະຕິເສດບຸກຄົນໃດໆ ໃນການເຂົ້າເຖິງ, ຫຼື ການເປັນສະມາຊິກ ຫຼື ການເຂົ້າຮ່ວມໃນ, ອົງກອນໃດໆ, ສະຖານທີ່ ຫຼື ການບໍລິການ (ເຊັ່ນ ການບໍລິການລວມຫຼາຍຢ່າງ) ທີ່ກ່ຽວພັນກັບການຂາຍ ຫຼື ການເຊົ່າເຮືອນ, ຫຼື ການຈໍາແນກຕ້ານກັບບຸກຄົນໃດໆ ກ່ຽວກັບ ຂໍ້ກໍານົດ ຫຼື ເງື່ອນໄຂຂອງການເຂົ້າເຖິງ, ການເປັນສະມາຊິກ ຫຼື ການເຂົ້າຮ່ວມດັ່ງກ່າວ.

**ການໃຫ້ຢືມເງິນກູ້:** ບໍ່ມີໃຜສາມາດປະຕິບັດສິ່ງໃດໜຶ່ງຕໍ່ໄປນີ້ ໂດຍອີງໃສ່ ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມພິການ, ສະຖານະທາງຄອບຄົວ, ຫຼື ຊາດກໍາເນີດ:

- ປະຕິເສດທີ່ຈະໃຫ້ເງິນກູ້
- ປະຕິເສດທີ່ຈະໃຫ້ຂໍ້ມູນກ່ຽວກັບເງິນກູ້
- ວາງຂໍ້ກໍານົດ ແລະເງື່ອນໄຂໃນດ້ານເງິນກູ້, ເຊັ່ນ ອັດຕາດອກເບັ້ຍທີ່ແຕກຕ່າງ, ຄະແນນ, ຫຼື ຄ່າທໍານຽມ
- ຈໍາແນກກ່ຽວກັບການປະເມີນອະສັງຫາລິມະຊັບ
- ປະຕິເສດທີ່ຈະໃຫ້ເງິນກູ້ເພື່ອການຊື້ຊັບສິນ ຫຼື
- ວາງຂໍ້ກໍານົດ ຫຼື ເງື່ອນໄຂສໍາລັບເງິນກູ້ເພື່ອການຊື້ຊັບສິນ.

ນອກຈາກນີ້, ມັນຍັງເປັນການລະເມີດກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ໃນການ:

- ຂົ່ມຂູ່, ບັງຄັບ, ຂົ່ມເຫັງ ຫຼື ຂັດຂວາງບຸກຄົນໃດໆ ກໍຕາມທີ່ໃຊ້ສິດໃນເລື້ອງທີ່ພັກອາໄສທີ່ເປັນທັມ ຫຼື ການຊ່ວຍຜູ້ອື່ນທີ່ໃຊ້ສິດ
- ເຮັດ, ພິມ, ຫຼື ຕີພິມຂໍ້ຄວາມໃດໆ, ທີ່ກ່ຽວຂ້ອງກັບການຂາຍ ຫຼືການເຊົ່າເຮືອນ, ຊຶ່ງລະບຸບອກຄວາມມັກຊອບ, ການຈໍາກັດ, ຫຼືການຈໍາແນກທີ່ອີງໃສ່ຈໍາແນກທີ່ອີງໃສ່ ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມພິການ, ສະຖານະດ້ານຄອບຄົວ, ຫຼື ຊາດກໍາເນີດ. ການຫ້າມນີ້ ຕ້ານໃສ່ການໂຄສະນາທີ່ເປັນການຈໍາແນກທີ່ໃຊ້ກັບທີ່ພັກສໍາລັບຄອບຄົວດ່ຽວ ແລະທີ່ພັກທີ່ເຈົ້າຂອງພັກອາໄສຢູ່ດ້ວຍ ຊຶ່ງໄດ້ຮັບການຍົກເວັ້ນຈາກກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ
- ປະຕິເສດທີ່ຈະຈັດຫາປະກັນໄພຄຸ້ມຄອງເຈົ້າຂອງເຮືອນສໍາລັບເຮືອນເນື່ອງຈາກ ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມພິການ, ສະຖານະທາງຄອບຄົວ, ຫຼື ຊາດກໍາເນີດຂອງເຈົ້າຂອງເຮືອນ ແລະ/ຫຼືຜູ້ເຂົ້າຢູ່ອາໄສໃນເຮືອນ
- ການຈໍາແນກກ່ຽວກັບຂໍ້ກໍານົດ ຫຼື ເງື່ອນໄຂຂອງປະກັນໄພຄຸ້ມຄອງຂອງເຈົ້າຂອງເຮືອນ ອັນເນື່ອງຈາກ ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມ





ພິການ, ສະຖານະທາງຄອບຄົວ, ຫຼື ຊາດກຳເນີດຂອງເຈົ້າຂອງເຮືອນ ແລະ/ຫຼື ຜູ້ເຊົ່າຢູ່ອາໄສໃນເຮືອນ

- ປະຕິເສດທີ່ຈະໃຫ້ຂໍ້ມູນທີ່ມີຢ່າງເຕັມສ່ວນກ່ຽວກັບທາງເລືອກຂອງປະກັນໄພຄຸ້ມຄອງເຈົ້າຂອງເຮືອນທີ່ມີໃຫ້ ອັນເນື່ອງຈາກ ເຊື້ອຊາດ, ອື່ນໆ ຂອງເຈົ້າຂອງ ແລະ/ຫຼື ຜູ້ຢູ່ອາໃສໃນເຮືອນ
- ເຮັດ, ພິມ, ຫຼື ຕີພິມຂໍ້ຄວາມໃດໆ, ທີ່ກ່ຽວຂ້ອງກັບຂໍ້ກຳນົດການຄຸ້ມຄອ ງຂອງປະກັນໄພຂອງເຈົ້າຂອງເຮືອນ, ຊຶ່ງລະບຸບອກ ຄວາມມັກຊອບ, ການຈຳກັດ, ຫຼື ການຈຳແນກທີ່ອີງໃສ່ ເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ຄວາມພິການ, ສະຖານະທາງຄອບຄົວ, ຫຼື ຊາດກຳເນີດ.

## ການປົກປ້ອງເພີ່ມເຕີມ ຖ້າວ່າ ທ່ານພິການ

ຖ້າວ່າ ທ່ານ ຫຼື ໃຜຜູ້ໜຶ່ງທີ່ກ່ຽວຂ້ອງກັບທ່ານ:

- ມີຄວາມພິການທາງຮ່າງກາຍ ຫຼື ຈິດໃຈ (ລວມເຖິງ ການບົກຜ່ອງດ້ານການໄດ້ຍິນ, ການເຄື່ອນໄຫວ ແລະດ້ານສາຍຕາ, ມະເຮັງ, ຄວາມເຈັບປ່ວຍທາງຈິດແບບຊ້ຳເຮື້ອ, ເອຊ ໄອ ວີ/ເອດສ໌, ຫຼື ປັນຍາອ່ອນ) ຊຶ່ງຈຳກັດການເຮັດກິດຈະກຳຫຼັກໆ ໃນຊີວິດຢ່າງເຫັນໄດ້ ຊັດ
- ມີປະຫວັດບັນທຶກວ່າມີຄວາມພິການດັ່ງກ່າວ ຫຼື
- ຖືກອ້າງເຖິງວ່າມີຄວາມພິການດັ່ງກ່າວ, ຜູ້ໃຫ້ບໍລິການດ້ານທີ່ພັກອາໄສບໍ່ສາມາດ:
  - ປະຕິເສດທີ່ຈະອະນຸຍາດໃຫ້ທ່ານເຮັດການດັດແປງບ່ອນຢູ່ອາໄສຂອງທ່ານ ຫຼື ບໍລິເວນສ່ວນກາງທີ່ໃຊ້ຮ່ວມກັນຢ່າງສົມເຫດຜົນ ໂດຍທ່ານເປັນຜູ້ອອກຄ່າໃຊ້ຈ່າຍ, ຖ້າວ່າ ມັນຈຳເປັນເພື່ອໃຫ້ທ່ານສາມາດໃຊ້ທີ່ພັກອາໄສໄດ້ຢ່າງເຕັມສ່ວນ. (ເມື່ອເໝາະສົມ, ເຈົ້າຂອງເຮືອນເຊົ່າອາດອະນຸຍາດໃຫ້ທ່ານດັດແປງບ່ອນຢູ່ໄດ້ສະເພາະຖ້າວ່າ ທ່ານຕົກລົງທີ່ຈະສ້ອມແປງທີ່ພັກໃຫ້ມີສະພາບກັບຄືນ ຄືເກົ່າເມື່ອຕອນທ່ານຍ້າຍອອກ.)
  - ປະຕິເສດທີ່ຈະເຮັດໃຫ້ການຢູ່ອາໄສສົມເຫດຜົນໃນດ້ານກົດລະບຽບ, ນະໂຍບາຍ, ແນວທາງການປະຕິບັດ ຫຼື ການບໍລິການຕ່າງໆ ຖ້າວ່າ ມັນອາດຈຳເປັນສຳລັບທ່ານເພື່ອຈະໃຊ້ເຮືອນພັກອາໄສຢ່າງເທົ່າທຽມກັນກັບບຸກຄົນທີ່ບໍ່ໄດ້ພິການ.

**ຕົວຢ່າງ:** ຕຶກອາຄານທີ່ມີນະໂຍບາຍ "ຫ້າມບໍ່ໃຫ້ມີສັດລ້ຽງ" ຕ້ອງອະນຸຍາດໃຫ້ຜູ້ພັກອາໄສທີ່ຕາບອດສາມາດລ້ຽງໝາສຳລັບນຳທາງ ຄົນຕາບອດໄດ້.

**ຕົວຢ່າງ:** ຫ້ອງຊຸດອາພາດເມັນຊຶ່ງສະເໜີໃຫ້ແກ່ຜູ້ອາໄສສຳລັບບ່ອນຈອດຣົຖທີ່ໃຫຍ່ພຽງພໍ, ແລະຍັງບໍ່ໄດ້ກຳນົດໃຫ້ໃຜນັ້ນ ຕ້ອງໃຫ້ສິດແກ່ຄຳຮ້ອງຂໍຂອງຜູ້ພັກອາໄສທີ່ມີບັນຫາດ້ານການເຄື່ອນໄຫວສຳລັບການຈອງບ່ອນຈອດຣົຖ





ໃຫ້ຢູ່ໃກ້ຫ້ອງອາພາດເມັນຂອງລາວ ຖ້າວ່າມັນຈຳເປັນ ເພື່ອ ຮັບປະກັນວ່າ ລາວສາມາດເຂົ້າໄປໃນອາພາດເມັນຂອງລາວໄດ້. ຢ່າງໃດກໍຕາມ, ກົດໝາຍວ່າດ້ວຍ ທີ່ພັກອາໄສທີ່ເປັນທັມ ບໍ່ປົກປ້ອງ ຜູ້ທີ່ເປັນອັນຕະລາຍ ໂດຍກົງຕໍ່ສຸຂະພາບ ຫຼື ຄວາມປອດໄພຂອງຜູ້ອື່ນໆ ຫຼື ຜູ້ທີ່ກຳລັງນຳໃຊ້ ຢາເສບຕິດຜິດກົດໝາຍ.

**ຂໍ້ກຳນົດການເຂົ້າເຖິງສຳລັບຕຶກອາຄານໃໝ່ສຳລັບຄອບຄົວໃຫຍ່:** ໃນຕຶກອາຄານທີ່ມີຫ້ອງ ຫ້ອງອງພັກອາໄສສີ່ຫ້ອງຂຶ້ນໄປ ຊຶ່ງມີຜູ້ເຂົ້າຢູ່ທຳອິດ ຫຼັງວັນທີ 13 ມີນາ 1991, ແລະມີລິຟ:

- ບໍລິເວນສາທາລະນະ ແລະມີການໃຊ້ຮ່ວມກັນ ຕ້ອງສາມາດເຂົ້າເຖິງໄດ້ ສຳລັບບຸກຄົນທີ່ພິການ
- ປະຕູ ແລະທາງຢ່າງທັງໝົດຕ້ອງກວ້າງຂວາງພໍສຳລັບຣົຖລໍ້ຄົນພິການ
- ທຸກຫ້ອງຕ້ອງມີ:
  - ເສັ້ນທາງເຂົ້າອອກແລະຜ່ານຫ້ອງພັກໄດ້ຕະຫຼອດ
  - ສວິທໄຟຟ້າ, ຮູປັກສຽບສາຍໄຟ, ເຄື່ອງຄວບຄຸມອຸນຫະພູມ ແລະເຄື່ອງ ຄວບຄຸມສິ່ງແວດລ້ອມອື່ນໆ
  - ເຮັດໃຫ້ຝາຫ້ອງນ້ຳແຂງແຮງເພື່ອໃຫ້ສາມາດຕິດຕັ້ງຮາວຈັບໄດ້ ແລະ
  - ຫ້ອງຄົວກິນ ແລະຫ້ອງນ້ຳ ຕ້ອງສາມາດນຳໃຊ້ໄດ້ສຳລັບບຸກຄົນທີ່ໃຊ້ ຣົຖລໍ້ຄົນພິການ.

ຖ້າວ່າ ຕຶກອາຄານທີ່ມີຫ້ອງພັກສີ່ຫ້ອງຂຶ້ນໄປ ບໍ່ມີລິຟ ແລະໄດ້ມີຄົນເຂົ້າຢູ່ອາໄສ ຄັ້ງທຳອິດຫຼັງວັນທີ 13 ມີນາ 1991, ມາດຕະຖານເຫຼົ່ານີ້ ສາມາດນຳໃຊ້ໄດ້ກັບ ຫ້ອງພັກຊັ້ນຕິດດິນເທົ່ານັ້ນ.

ຂໍ້ກຳນົດການເຂົ້າເຖິງເຫຼົ່ານີ້ສຳລັບຕຶກອາຄານໃໝ່ສຳລັບຄອບຄົວທີ່ຢູ່ ກັນຫຼາຍຄົນບໍ່ສາມາດນຳໃຊ້ແທນມາດຕະຖານການເຂົ້າເຖິງທີ່ເຂັ້ມງວດ ກວ່ານີ້ ຊຶ່ງກຳນົດໄວ້ພາຍໃຕ້ກົດໝາຍຂອງຣັຖ ຫຼື ຂອງທ້ອງຖິ່ນ.

## ການປົກປ້ອງດ້ານທີ່ພັກອາໄສສຳລັບຄອບຄົວທີ່ມີລູກ

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ກຳນົດວ່າມັນຜິດກົດໝາຍທີ່ຈະຈຳແນກຕ້ານໃສ່ ບຸກຄົນໃດໜຶ່ງຜູ້ທີ່ຄົວເຮືອນຂອງເຂົາມີເດັກຢູ່ນຳ ໜຶ່ງຄົນຂຶ້ນໄປຊຶ່ງເປັນເດັກທີ່ອາຍຸຕ່ຳ ກວ່າ 18 ປີ (ສະຖານະທາງຄອບຄົວ). ການປ້ອງປົກສະຖານະທາງຄອບຄົວລວມເຖິງ ຄົວເຮືອນທີ່ມີເດັກທີ່ອາຍຸຍັງບໍ່ຮອດ ກະສຽງເປັນຜູ້ໃຫຍ່ອາໄສຢູ່ນຳໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ:

- ພໍ່ແມ່;
- ບຸກຄົນທີ່ເປັນຜູ້ປົກຄອງຕາມກົດໝາຍ (ລວມເຖິງ ຜູ້ຄຸ້ມຄອງດູແລ) ຂອງເດັກທີ່ອາຍຸຍັງບໍ່ຮອດກະສຽນ ຫຼື ເດັກ; ຫຼື





- ຜູ້ຖືກແຕ່ງຕັ້ງໃຫ້ເປັນພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍ, ພ້ອມກັບມີໜັງສືອະນຸຍາດຂອງພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍ. ການປົກປ້ອງສະຖານະທາງຄອບຄົວຍັງຄຸ້ມຄອງໄປເຖິງຜູ້ຍິງຖືພາ ແລະບຸກຄົນໃດກໍຕາມທີ່ຢູ່ໃນຂັ້ນຕອນການຮັກສາການເປັນຜູ້ປົກຄອງ (ລວມເຖິງ ພໍ່ແມ່ອຸປະຖັມ).

**ການຍົກເວັ້ນ "ທີ່ພັກອາໄສສຳລັບຜູ້ສູງອາຍຸ":** ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມຍົກເວັ້ນໂດຍສະເພາະແກ່ສະຖານທີ່ພັກບາງແຫ່ງ ສຳລັບຜູ້ສູງອາຍຸ ແລະ ຊຸມຊົນຕ່າງໆ ຈາກການຮັບຜິດຊອບສຳລັບການຈຳແນກສະຖານະທາງຄອບຄົວ. ສະຖານທີ່ພັກ ຫຼື ຊຸມຊົນສຳລັບ ຜູ້ສູງອາຍຸທີ່ຖືກຍົກເວັ້ນນັ້ນ ສາມາດປະຕິເສດໄດ້ຢ່າງຖືກກົດໝາຍໃນການຂາຍ ຫຼື ໃຫ້ເຊົ່າເຮືອນແກ່ບັນດາຄອບຄົວຕ່າງໆ ທີ່ມີເດັກ ອາຍຸຍັງບໍ່ຮອດກະສຽນເປັນຜູ້ໃຫຍ່. ເພື່ອໃຫ້ມີຄຸນສົມບັດເໝາະສົມທີ່ຈະໄດ້ຮັບການຍົກເວັ້ນ "ທີ່ພັກອາໄສສຳລັບຜູ້ສູງອາຍຸ", ທາງສະຖານທີ່ພັກ ຫຼື ຊຸມຊົນຕ້ອງພິສູດວ່າ ເຮືອນພັກຂອງຕົນນັ້ນແມ່ນ:

- ຖືກກຳນົດໄວ້ພາຍໃຕ້ໂຄງການຂອງຣັຖ ຫຼື ຣັຖບານກາງ ວ່າ HUD ໄດ້ພິຈາລະນາຕັດສິນວ່າໄດ້ຖືກອອກແບບແລະດຳເນີນການເປັນການສະເພາະເພື່ອຊ່ວຍເຫຼືອຜູ້ສູງອາຍຸ (ຕາມທີ່ກຳນົດໄວ້ໃນໂຄງການຂອງຣັຖ ຫຼື ຣັຖບານກາງ); ຫຼື
- ມີເຈຕະນາສຳລັບ, ແລະ ໂດຍທັງໝົດ ໃຫ້ເຂົ້າຢູ່ໄດ້ໂດຍບຸກຄົນທີ່ອາຍຸ 62 ປີຂຶ້ນໄປ; ຫຼື
- ມີເຈຕະນາ ແລະ ດຳເນີນການສຳລັບການເຂົ້າພັກອາໄສໂດຍບຸກຄົນທີ່ມີອາຍຸ 55 ປີ ຂຶ້ນໄປ.

**ເພື່ອໃຫ້ມີຄຸນສົມບັດສຳລັບຂໍ້ຍົກເວັ້ນທີ່ພັກອາໄສສຳລັບຜູ້ທີ່ມີ "ອາຍຸ 55 ປີຂຶ້ນໄປ",** ສະຖານທີ່ພັກ ຫຼື ຊຸມຊົນນັ້ນຕ້ອງ ມີເງື່ອນໄຂ ຄົບຖ້ວນຕາມຂໍ້ກຳນົດຕໍ່ໄປນີ້:

- ຢ່າງໜ້ອຍ 80 ເປີເຊັນ ຂອງຫ້ອງພັກຕ່າງໆ ຕ້ອງມີຜູ້ເຂົ້າຢູ່ຢ່າງໜ້ອຍໜຶ່ງຄົນທີ່ມີອາຍຸ 55 ປີຂຶ້ນໄປ; ແລະ
- ສະຖານທີ່ພັກ ຫຼື ຊຸມຊົນນັ້ນ ຕ້ອງຕີພິມ ແລະຕິດປະກາດນະໂຍບາຍ ແລະ ລະບຽບການ ຊຶ່ງອະທິບາຍໃຫ້ເຫັນເຖິງ ເຈດຕະນາທີ່ຈະ ດຳເນີນການເປັນທີ່ພັກອາໄສສຳລັບບຸກຄົນອາຍຸ "55 ປີຂຶ້ນໄປ"; ແລະ
- ສະຖານທີ່ພັກ ຫຼື ຊຸມຊົນຕ້ອງປະຕິບັດຕາມຂໍ້ກຳນົດດ້ານກົດລະບຽບຂອງ HUD ສຳລັບການກວດສອບອາຍຸຂອງຜູ້ພັກອາໄສ

ການຍົກເວັ້ນ "ທີ່ພັກສຳລັບຜູ້ສູງອາຍຸ" ບໍ່ປົກປ້ອງຄຸ້ມຄອງສະຖານທີ່ພັກ ຫຼື ຊຸມຊົນຂອງຜູ້ສູງອາຍຸ ຈາກຄວາມຮັບຜິດຊອບສຳລັບ ການຈຳແນກດ້ານທີ່ພັກອາໄສທີ່ອີງໃສ່ ເຊື້ອຊາດ, ສີຜິວ, ເພດ, ຄວາມພິການ ຫຼື ຊາດກຳເນີດ.





HUD ແມ່ນພ້ອມທີ່ຈະຊ່ວຍເຫຼືອດ້ານບັນຫາການຈໍາແນກກ່ຽວກັບທີ່ພັກອາໄສ. ຖ້າວ່າ ທ່ານຄິດວ່າ ສິດທິຂອງທ່ານໄດ້ຖືກລະເມີດ, ທ່ານສາມາດຍື່ນຄໍາຮ້ອງທຸກ ໄດ້ທາງອອນລາຍ, ຂຽນຈົດໝາຍ ຫຼື ໂທຣະສັບໄປທີ່ຫ້ອງການ HUD ທີ່ຢູ່ໃກ້ ທ່ານທີ່ສຸດ. ທ່ານມີເວລາ ໜຶ່ງປີຫຼັງຈາກການຈໍາແນກທີ່ກ່າວຫານັ້ນໄດ້ເກີດຂຶ້ນ ຫຼື ສິ້ນສຸດ ເພື່ອຍື່ນຄໍາຮ້ອງທຸກຕໍ່ HUD, ແຕ່ທ່ານຄວນຍື່ນເລື້ອງໃຫ້ໄວເທົ່າທີ່ ເປັນໄປໄດ້.

## ຖ້າວ່າ ທ່ານຄິດວ່າ ສິດທິຂອງທ່ານຖືກລະເມີດ

**ສິ່ງທີ່ຄວນຈະບອກແກ່** HUD:

- ຊື່ແລະທີ່ຢູ່ຂອງທ່ານ
- ຊື່ ແລະທີ່ຢູ່ຂອງບຸກຄົນທີ່ຄໍາຮ້ອງທຸກຂອງທ່ານກ່າວເຖິງ (ຈໍາເລີຍ)
- ທີ່ຢູ່ ຫຼື ເອກະສານສະແດງເຖິງທີ່ພັກທີ່ກ່ຽວຂ້ອງນັ້ນ
- ຄໍາອະທິບາຍສັ້ນໆ ກ່ຽວກັບການລະເມີດທີ່ກ່າວຫາ (ເຫດການທີ່ເປັນ ສາເຫດໃຫ້ທ່ານເຊື່ອວ່າ ທ່ານຖືກລະເມີດສິດທິ)
- ວັນທີຂອງການລະເມີດທີ່ກ່າວຫາ.

**ຈະຂຽນ ຫຼື ໂທຣໄປບ່ອນໃດ:** ຍື່ນເລື້ອງຮ້ອງທຸກທາງອອນລາຍ, ສົ່ງຈົດໝາຍໄປທີ່ຫ້ອງການ HUD ທີ່ຢູ່ໃກ້ກັບທ່ານທີ່ສຸດ, ຫຼື ຖ້າວ່າ ທ່ານປາດຖະໜາ, ທ່ານສາມາດໂທຣໄປທີ່ຫ້ອງ ການນັ້ນໂດຍກົງ. ບຸກຄົນຕ່າງໆ ທີ່ຕາບອດ ຫຼື ຫູໜວກ ແລະໃຊ້ສາຍໂທຣ TTY, ສາມາດ ໂທຣໄປທີ່ຫ້ອງການເຫຼົ່ານີ້ຜ່ານສາຍໂທຣຟຣີ ບໍລິການສົ່ງຕໍ່ຂໍ້ມູນຂອງຣັຖບານກາງທີ່ເລກ ໂທຣ 1-800-877-8339.

*ສໍາລັບ ຄອນເນັກຕິກັດ, ເມນ, ແມສຊາຊູເຊັທ, ນິວແຮມເຊັຽ, ໂຣດ ໄອແລນ ແລະເວີມອນ:*
**ຫ້ອງການພູມິພາກບອສຕັນ (BOSTON REGIONAL OFFICE)**
*(Complaints_office_01@HUD.gov)*
U.S. Department of Housing and Urban Development
Thomas P. O'Neill Jr. Federal Building
10 Causeway Street, Room 321
Boston, MA 02222-1092
ໂທຣະສັບ (617) 994-8300 ຫຼື 1-800-827-5005
ແຟກຊ (617) 565-7313 * TTY (617) 565-5453





*ສຳລັບ ນິວເຈີຊີ, ນິວຢອກ, ເປີໂຕຣິໂກ ແລະ ເກາະເວີຈິນ ສະຫະຣັຖ:*
**ຫ້ອງການພູມີພາກນິວຢອກ (NEW YORK REGIONAL OFFICE)**
*(Complaints_office_02@HUD.gov)*
U.S. Department of Housing and Urban Development
26 Federal Plaza, Room 3532
New York, NY 10278-0068
ໂທຣະສັບ (212) 542-7519 ຫຼື 1-800-496-4294
ແຟກຊ (212) 264-9829 * TTY (212) 264-0927

*ສຳລັບ ເດລລາແວ, ດິສຕິກ ອອຟ ໂຄລັມເບັຽ, ແມຣີ່ແລນດ໌, ເພັນຊິນວາເນັຽ, ເວີຈິເນັຽ ແລະ ເວສ ເວີຈິເນັຽ:*
**ຫ້ອງການພູມີພາກຟີລາເດເຟັຽ (PHILADELPHIA REGIONAL OFFICE)**
*(Complaints_office_03@HUD.gov)*
U.S. Department of Housing and Urban Development
The Wanamaker Building
100 Penn Square East
Philadelphia, PA 19107-9344
ໂທຣະສັບ (215) 861-7646 ຫຼື 1-888-799-2085
ແຟກຊ (215) 656-3449 * TTY (215) 656-3450

*ສຳລັບ ອລາບາມາ, ຟໍລິດາ, ຈໍເຈັຽ, ເຄັນຕັກກີ້, ມິຊຊູຣີ່, ນອທ ແຄໂຣໄລນາ, ເຊົາທ໌ ແຄໂຣໄລນາ, ແລະ ເທັນເນັສຊີ່:*
**ຫ້ອງການພູມີພາກແອຕແລນຕ້າ (ATLANTA REGIONAL OFFICE)**
*(Complaints_office_04@HUD.gov)*
U.S. Department of Housing and Urban Development
Five Points Plaza
40 Marietta Street, 16th Floor
Atlanta, GA 30303-2808
ໂທຣະສັບ (404) 331-5140 ຫຼື 1-800-440-8091 x2493
ແຟກຊ (404) 331-1021 * TTY (404) 730-2654





*ສຳລັບ ອິລລິນອຍ, ອິນດຽນນ່າ, ມິຊິແກນ, ມິນນີໂຊຕາ, ໂອໄຮໂອ ແລະ ວິສຄອນຊິນ:*
**ຫ້ອງການພູມິພາກຊິຄາໂກ (CHICAGO REGIONAL OFFICE)**
*(Complaints_office_*05@HUD*.gov)*
U.S. Department of Housing and Urban Development
Ralph H. Metcalfe Federal Building
77 West Jackson Boulevard, Room 2101
Chicago, IL 60604-3507
ໂທຣະສັບ 1-800-765-9372
ແຟກຊ (312) 886-2837 * TTY (312) 353-7143

*ສຳລັບ ອາຄັນຊັສ, ຫຼຸຍເຊັຽນ່າ, ນິວແມັກຊິໂກ, ໂອກລາໂຮມ່າ ແລະ ເທັກຊັສ:*
**ຫ້ອງການພູມິພາກຟອທເວີທ (FORT WORTH REGIONAL OFFICE)**
*(Complaints_office_*06@HUD*.gov)*
U.S. Department of Housing and Urban Development
801 Cherry Street
Suite 2500, Unit #45
Fort Worth, TX 76102-6803
ໂທຣະສັບ (817) 978-5900 ຫຼື 1-888-560-8913
ແຟກຊ (817) 978-5876/5851 * TTY (817) 978-5595

*ສຳລັບ ໄອໂອວາ, ແຄນຊັສ, ມິສຊູຣີ ແລະ ເນບຣາສກ້າ:*
**ຫ້ອງການພູມິພາກແຄນຊັສ ຊິຕີ້ (KANSAS CITY REGIONAL OFFICE)**
*(Complaints_office_*07@HUD*.gov)*
U.S. Department of Housing and Urban Development
Gateway Tower II
400 State Avenue, Room 200, 4th Floor
Kansas City, KS 66101-2406
ໂທຣະສັບ (913) 551-6958 ຫຼື 1-800-743-5323
ແຟກຊ (913) 551-6856 * TTY (913) 551-6972

*ສຳລັບ ໂຄໂລຣາໂດ, ມອນທານາ, ນອທດາໂກຕ້າ, ເຊົາທ໌ດາໂກຕ້າ, ຢູທາ ແລະ ໄວໂອມິ່ງ:*
**ຫ້ອງການພູມິພາກເດັນເວີ (DENVER REGIONAL OFFICE)**
*(Complaints_office_*08@HUD*.gov)*
U.S. Department of Housing and Urban Development
1670 Broadway
Denver, CO 80202-4801
ໂທຣະສັບ (303) 672-5437 ຫຼື 1-800-877-7353
ແຟກຊ (303) 672-5026 * TTY (303) 672-5248





*ສຳລັບ ອາຣິໂຊນາ, ແຄລິຟໍເນັຽ, ຮາວາຍ ແລະເນວາດາ:*
**ຫ້ອງການພູມີພາກແຊນຟຣານຊິສໂກ (SAN FRANCISCO REGIONAL OFFICE)**
*(Complaints_office_*09@HUD*.gov)*
U.S. Department of Housing and Urban Development
600 Harrison Street, Third Floor
San Francisco, CA 94107-1387
ໂທຣະສັບ 1-800-347-3739
ແຟກຊ໌ (415) 489-6558 * TTY (415) 489-6564

*ສຳລັບ ອາລາສະກ້າ, ໄອດາໂຮ, ອໍຣິກອນ ແລະວໍຊິງຕັນ:*
**ຫ້ອງການພູມີພາກຊີແອຕເຕີ້ນ (SEATTLE REGIONAL OFFICE)**
*(Complaints_office_*10@HUD*.gov)*
U.S. Department of Housing and Urban Development
Seattle Federal Office Building
909 First Avenue, Room 205
Seattle, WA 98104-1000
ໂທຣະສັບ (206) 220-5170 ຫຼື 1-800-877-0246
ແຟກຊ໌ (206) 220-5447 * TTY (206) 220-5185

ຖ້າວ່າ ຫຼັງຈາກຕິດຕໍ່ຫ້ອງການທີ່ຢູ່ໃກ້ທ່ານທີ່ສຸດ, ທ່ານຍັງຄົງມີຄຳຖາມຕ່າງໆ - ທ່ານສາມາດຕິດຕໍ່ HUD ເພີ່ມເຕີມໄດ້ທີ່:

U.S. Department of Housing and Urban Development
Office of Fair Housing and Equal Opportunity
451 7th Street, S.W., Room 5204
Washington, DC 20410-2000
ໂທຣະສັບ 1-800-669-9777
ແຟກຊ໌ (202) 708-1425 * TTY 1-800-927-9275
www.HUD.gov/fairhousing

**ຖ້າວ່າ ທ່ານພິການ:** HUD ຍັງຈັດຫາ:

- ສາຍໂທຣ TTY ສຳລັບ ຜູ້ໃຊ້ທີ່ຫູໜວກ/ບໍ່ຄ່ອຍໄດ້ຍິນ (ເບິ່ງ ລາຍຊື່ຂ້າງເທິງສຳລັບຫ້ອງການ HUD ທີ່ຢູ່ໃກ້ທ່ານທີ່ສຸດ)
- ນາຍພາສາ, ເທັບ ແລະສື່ທີ່ເປັນພາສາເບຣລ
- ການຊ່ວຍເຫຼືອໃນການອ່ານ ແລະການປະກອບຟອມ





## ຈະເກີດຫຍັງຂຶ້ນ ເມື່ອທ່ານຍື່ນຄຳຮ້ອງທຸກ?

HUD ຈະແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນເມື່ອຄຳຮ້ອງທຸກຂອງທ່ານຖືກຍອມຮັບສຳລັບການຍື່ນເລື້ອງພາຍໃຕ້ກົດໝາຍວ່າດ້ວຍ ທີ່ພັກອາໄສທີ່ເປັນທັມ. HUD ຍັງຈະ:

- ແຈ້ງໃຫ້ຜູ້ຖືກກ່າວຫາ (ຈຳເລີຍ) ໃຫ້ຊາບເຖິງການຍື່ນຄຳຮ້ອງທຸກຂອງທ່ານ, ແລະໃຫ້ເວລາແກ່ຈຳເລີຍໃນການ ຍື່ນໜັງສືຕອບຕໍ່ຄຳຮ້ອງທຸກ.
- ສືບສວນຄຳຮ້ອງທຸກຂອງທ່ານ, ແລະ ຕັດສິນວ່າ ມີສາເຫດທີ່ສົມເຫດຜົນຫຼືບໍ່ທີ່ຈະເຊື່ອວ່າ ຈຳເລີຍໄດ້ລະເມີດກົດໝາຍວ່າດ້ວຍ ທີ່ພັກອາໄສທີ່ເປັນທັມ.
- ແຈ້ງໃຫ້ທ່ານ ແລະຈຳເລີຍຊາບ ຖ້າວ່າ HUD ບໍ່ສາມາດເຮັດການສືບສວນໃຫ້ສຳເລັດໄດ້ພາຍໃນ 100 ວັນ ນັບແຕ່ວັນຍື່ນ ຄຳຮ້ອງທຸກ, ແລະໃຫ້ເຫດຜົນສຳລັບຄວາມຊັກຊ້ານັ້ນ.

**ການໄກ່ເກັ່ຍກັນໃນກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ:** ໃນລະຫວ່າງການສືບສວນຄຳຮ້ອງທຸກ, HUD ຕ້ອງສະເໜີໂອກາດແກ່ທ່ານ ແລະຈຳເລີຍ ໃນການແກ້ໄຂບັນຫາຄຳຮ້ອງທຸກຂອງທ່ານດ້ວຍຂໍ້ຕົກລົງການໄກ່ເກັ່ຍ (Conciliation Agreement). ຂໍ້ຕົກລົງ ການໄກ່ເກັ່ຍ ສະໜອງການບັນເທົາສ່ວນບຸກຄົນໃຫ້ແກ່ທ່ານ, ແລະປົກປ້ອງຜົນປະໂຫຍດຂອງສາທາລະນະໂດຍການຂັດຂວາງ ການຈຳແນກໃນອະນາຄົດໂດຍຈຳເລີຍ. ເມື່ອທ່ານແລະຈຳເລີຍເຊັນຊື່ໃນຂໍ້ຕົກລົງການໄກ່ເກັ່ຍ, ແລະ HUD ອະນຸມັດຂໍ້ຕົກລົງ, HUD ຈະຍຸດຕິການສືບສວນຄຳຮ້ອງທຸກຂອງທ່ານ. ຖ້າວ່າ ທ່ານເຊື່ອວ່າຈຳເລີຍໄດ້ລະເມີດ ຫຼື ຝ່າຝືນຂໍ້ຕົກລົງການໄກ່ເກັ່ຍຂອງທ່ານ, ທ່ານຄວນແຈ້ງທັນທີຕໍ່ຫ້ອງການ HUD ທີ່ໄດ້ສືບສວນຄຳຮ້ອງທຸກຂອງທ່ານ. ຖ້າວ່າ HUD ພິຈາລະນາວ່າມີສາເຫດທີ່ສົມເຫດຜົນ ທີ່ຈະເຊື່ອໄດ້ວ່າ ຈຳເລີຍໄດ້ລະເມີດຂໍ້ຕົກລົງ, HUD ຈະຂໍໃຫ້ກະຊວງຍຸດຕິທັມແຫ່ງສະຫະຣັຖ ໃຫ້ຍື່ນຟ້ອງຮ້ອງຕ້ານກັບຈຳເລີຍ ໃນສານຊັ້ນຕົ້ນເພື່ອບັງຄັບໃຊ້ເງື່ອນໄຂທີ່ລະບຸໃນຂໍ້ຕົກລົງ.

**ການສົ່ງຕໍ່ເລື້ອງຮ້ອງທຸກໄປທີ່ອົງການດູແລທີ່ພັກອາໄສທີ່ເປັນທັມຂອງຣັຖ ຫຼື ທ້ອງຖິ່ນ:** ຖ້າວ່າ HUD ໄດ້ຢັ້ງຢືນວ່າ ອົງການດູແລທີ່ພັກ ອາໄສທີ່ເປັນທັມຂອງຣັຖ ຫຼື ທ້ອງຖິ່ນຂອງທ່ານໄດ້ບັງຄັບໃຊ້ກົດໝາຍວ່າດ້ວຍສິດທິພົນລະເມືອງ ຫຼື ອງ ຫຼື ຄຳສັ່ງ ຊຶ່ງສະໜອງສິດທິ, ການແກ້ໄຂແລະການປົກປ້ອງຊຶ່ງ “ທຽບເທົ່າກັນຢ່າງຊັດເຈນ“ ກັບກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ, HUD ຕ້ອງສົ່ງຕໍ່ຄຳຮ້ອງທຸກຂອງທ່ານ ທັນທີໄປທີ່ອົງການນັ້ນເພື່ອການສືບສວນ, ແລະຕ້ອງແຈ້ງໃຫ້ທ່ານຊາບທັນທີເຖິງການສົ່ງຕໍ່ເລື້ອງ. ອົງການຂອງຣັຖ ຫຼື ທ້ອງຖິ່ນຈະສືບສວນຄຳຮ້ອງທຸກຂອງທ່ານພາຍໃຕ້ກົດໝາຍ ຫຼື ຄຳສັ່ງວ່າດ້ວຍສິດທິພົນລະເມືອງຂອງຣັຖ ຫຼື ຂອງທ້ອງຖິ່ນ “ທີ່ທຽບເທົ່າກັນ ຢ່າງຊັດເຈນ”. ອົງການດູແລທີ່ພັກອາໄສທີ່ເປັນທັມຂອງຣັຖ ຫຼື ຂອງທ້ອງຖິ່ນ ຕ້ອງເລີ່ມການສືບສວນຄຳຮ້ອງ ທຸກພາຍໃນ





30 ວັນນັບແຕ່ ວັນທີ່ HUD ສົ່ງເລື້ອງມາ, ຫຼື HUD ອາດຟື້ນຄືນ ("ດຳເນີນການໃໝ່") ຄຳຮ້ອງທຸກ ເພື່ອການສືບສວນ ພາຍໃຕ້ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ.

## ຈະເກີດຫຍັງຂຶ້ນ ຖ້າວ່າ ຂ້າພະເຈົ້າກຳລັງຈະສູນເສັຽທີ່ພັກອາໄສຈາກການຖືກຂັບໄລ່ ຫຼື ການຂາຍ?

ຖ້າວ່າ ທ່ານຕ້ອງການຄວາມຊ່ວຍເຫຼືອທັນທີເພື່ອຢຸດເຊົາ ຫຼື ປ້ອງກັນບັນຫາຮ້າຍແຮງທີ່ມີສາເຫດຈາກການລະເມີດກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ, HUD ອາດສາມາດຊ່ວຍທ່ານໄດ້ທັນທີທີ່ທ່ານຍື່ນຄຳຮ້ອງທຸກ. HUD ອາດອະນຸຍາດໃຫ້ກະຊວງຍຸດຕິທັມແຫ່ງ ສະຫະຣັຖອາເມລິກາ ຍື່ນຂໍ້ສະເໜີໃນສານຊັ້ນຕົ້ນ ເພື່ອຂໍໃຫ້ອອກຄຳສັ່ງຄວບຄຸມຍັບຍັ້ງຊົ່ວຄາວ (Temporary Restraining Order: TRO) ຕໍ່ຈຳເລີຍ, ຕາມດ້ວຍຄຳສັ່ງຫ້າມເບື້ອງຕົ້ນໃນລະຫວ່າງລໍຜົນອອກມາຂອງການສືບສວນຂອງ HUD. ຜູ້ພິພາກສາຂອງຣັຖບານກາງອາດອະນຸຍາດໃຫ້ມີ TRO ຫຼື ຄຳສັ່ງຫ້າມເບື້ອງຕົ້ນຕ້ານກັບຈຳເລີຍໃນກໍລະນີທີ່:

- ມີແນວໂນ້ມທີ່ຈະເກີດອັນຕະລາຍທີ່ແກ້ໄຂບໍ່ໄດ້ (ບໍ່ສາມາດປ່ຽນແປງໄດ້) ຫຼື ການບາດເຈັບ ຕໍ່ສິດທິດ້ານທີ່ພັກອາໄສ ຖ້າປາດສະຈາກການແຊກແຊງຂອງ HUD; ແລະ
- ມີຫຼັກຖານຢ່າງຊັດເຈນວ່າຈຳເລີຍໄດ້ລະເມີດກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ.

**ຕົວຢ່າງ:** ເຈົ້າຂອງຕຶກລົງທີ່ຈະຂາຍເຮືອນ, ແຕ່, ຫຼັງຈາກພົບວ່າ ຜູ້ຊື້ເປັນຄົນຜິວດຳ, ກໍໄດ້ດຶງບ້ານອອກຈາກຕະຫຼາດ, ຈາກນັ້ນ ກໍເອົາໄປປະກາດຂາຍອີກເທື່ອໜຶ່ງ. ຜູ້ຊື້ຍື່ນຄຳຮ້ອງທຸກວ່າດ້ວຍການຖືກຈຳແນກກັບ HUD. HUD ອາດອະນຸຍາດໃຫ້ກະຊວງຍຸດຕິທັມແຫ່ງສະຫະຣັຖໃຫ້ຊອກຫາເອົາຄຳສັ່ງຫ້າມຈາກສານຊັ້ນຕົ້ນ ເພື່ອປ້ອງກັນບໍ່ໃຫ້ເຈົ້າຂອງຂາຍເຮືອນໃຫ້ແກ່ຜູ້ອື່ນໃດ ຈົນກວ່າ HUD ຈະໄດ້ສືບສວນເລື້ອງຮ້ອງທຸກ.

## ຈະເກີດຫຍັງຂຶ້ນ ຫຼັງຈາກການສືບສວນເລື້ອງຮ້ອງທຸກ?

**ການພິຈາລະນາຕັດສິນສາເຫດທີ່ສົມຄວນ, ຂໍ້ຫາການຈຳແນກ, ແລະ ການເລືອກຕັ້ງ:** ເມື່ອການສືບສວນຄຳຮ້ອງທຸກຂອງທ່ານເຮັດສຳເລັດ ແລ້ວ, HUDຈະຕຽມລາຍງານການສືບສວນຂັ້ນສຸດທ້າຍ ຊຶ່ງສະຫຼຸບຫຼັກຖານຕ່າງໆ ທີ່ຮວບຮວມໄດ້ໃນລະຫວ່າງການສືບສວນ. ຖ້າວ່າ HUD ຕັດສິນວ່າ ມີສາເຫດສົມຄວນທີ່ຈະເຊື່ອໄດ້ວ່າ ຈຳເລີຍໄດ້ຈຳແນກຕໍ່ທ່ານ, ທາງ HUD ຈະອອກການຕັດສິນການມີສາເຫດທີ່ສົມເຫດຜົນ ແລະ ໃສ່ຂໍ້ຫາການຈຳແນກຕໍ່ຈຳເລີຍ. ທ່ານແລະ





ຈຳເລີຍ ມີເວລາຊາວ (20) ມື້ຫຼັງຈາກໄດ້ຮັບແຈ້ງການການໃສ່ຂໍ້ຫາ ເພື່ອພິຈາລະນາຕັດສິນວ່າ ຈະໃຫ້ຄະດີຂອງທ່ານຮັບການພິພາກສາໂດຍ ຜູ້ພິພາກສາກົດໝາຍປຶກຄອງຂອງ HUD ຫຼື ຈະໃຫ້ມີການພິຈາລະນາຄະດີແພ່ງໃນສານຊັ້ນຕົ້ນ.

**ການພິຈາລະນາຄະດີໂດຍຜູ້ພິພາກສາຄະດີປົກຄອງຂອງ** HUD: ຖ້າວ່າ ທັງທ່ານ ຫຼື ຈຳເລີຍ ບໍ່ເລືອກທີ່ຈະໃຫ້ມີການພິຈາລະນາຄະດີແພ່ງໃນສານຊັ້ນຕົ້ນ ກ່ອນຊ່ວງເວລາການເລືອກ 20 ວັນຈະໝົດລົງ, ທາງ HUD ຈະຈັດຕາຕະລາງການພິຈາລະນາທັນທີສຳລັບ ຄະດີຂອງທ່ານ ຕໍ່ໜ້າຜູ້ພິພາກສາຄະດີປົກຄອງ (ALJ) ຂອງ HUD. ການພິຈາລະນາຄະດີໂດຍ ALJ ຈະຈັດຂຶ້ນໃນເຂດພື້ນທີ່ ບ່ອນທີ່ມີການກ່າວຫາການຈຳແນກ. ໃນລະຫວ່າງການພິຈາລະນາຄະດີໂດຍ ALJ, ທ່ານແລະຈຳເລີຍມີສິດທີ່ຈະໄປປາກົດຕົວ, ມີທີ່ປຶກສາທາງກົດໝາຍເປັນຕົວແທນ, ຊັກຖາມພະຍານ ແລະຮ້ອງຂໍເອົາໝາຍເກາະເພື່ອຊ່ວຍໃນການຊອກເອົາຫຼັກຖານ. ທະນາຍຄວາມ ຂອງ HUD ຈະເປັນຕົວແທນໃຫ້ທ່ານໃນລະຫວ່າງການພິຈາລະນາຄະດີໂດຍ ALJ ໂດຍທ່ານບໍ່ຕ້ອງເສັຍຄ່າໃດໆ; ຢ່າງໃດກໍຕາມ, ທ່ານຍັງອາດເລືອກທີ່ຈະແຊກແຊງໃນຄະດີ ແລະ ວ່າຈ້າງທະນາຍຄວາມຂອງທ່ານເອງ. ໃນຕອນສະຫຼຸບຄະດີ, HUD ALJ ຈະອອກຄຳຕັດສິນອີງຕາມຫຼັກຖານການຄົ້ນພົບຂໍ້ເທັດຈິງ ແລະສະຫຼຸບບົດກົດໝາຍ. ຖ້າວ່າ HUD ALJ ສະຫຼຸບວ່າ ຈຳເລີຍໄດ້ລະເມີດກົດໝາຍ ວ່າດ້ວຍທີ່ພັກອາໄສທີ່ເປັນທັມ, ຈຳເລີຍຈະຖືກສັ່ງໃຫ້:

- ຈ່າຍຊົດເຊີຍຄ່າເສັຽຫາຍຈິງໃຫ້ແກ່ທ່ານ, ລວມເຖິງ ຄ່າໃຊ້ຈ່າຍຕ່າງໆ ທີ່ທ່ານໄດ້ອອກເອງ ແລະ ຄ່າເສັຽຫາຍທາງອາລົມຈິດໃຈ
- ຈັດຫາການບັນເທົາຕາມຄຳສັ່ງໃຫ້ໂດຍຖາວອນ.
- ຈັດຫາການບັນເທົາທີ່ມີຄ່າເທົ່າກັນແລະເໝາະສົມ (ເຊັ່ນ, ຫາບ້ານວ່າງໃຫ້ທ່ານ).
- ຈ່າຍຄ່າທະນາຍຄວາມຂອງທ່ານຢ່າງສົມເຫດຜົນ.
- ຈ່າຍຄ່າໂທດທາງຄະດີແພ່ງໃຫ້ແກ່ HUD ເພື່ອປົກປ້ອງຜົນປະໂຫຍດສາທາລະນະ. ຄ່າປັບທາງຄະດີແພ່ງມູນຄ່າສູງສຸດແມ່ນ: $16,000.00 ສຳລັບການລະເມີດກົດໝາຍຄັ້ງທຳອິດ; $37,500.00 ຖ້າວ່າ ເຄີຍມີການລະເມີດມາກ່ອນພາຍໃນລະຍະຫ້າປີ ກ່ອນໜ້າ; ແລະ $65,000.00 ຖ້າວ່າ ເຄີຍລະເມີດກົດໝາຍສອງຄັ້ງຂຶ້ນໄປຊຶ່ງເກີດຂຶ້ນພາຍໃນລະຍະເວລາເຈັດປີກ່ອນໜ້າ.

**ການພິຈາລະນາຄະດີແພ່ງໃນສານຊັ້ນຕົ້ນ:** ຖ້າວ່າ ທັງທ່ານ ຫຼື ຈຳເລີຍ ເລືອກທີ່ຈະໃຫ້ມີການພິຈາລະນາຄະດີແພ່ງໃນສານຊັ້ນຕົ້ນ ສຳລັບເລື້ອງຮ້ອງທຸກຂອງທ່ານ, HUD ຕ້ອງສົ່ງເລື້ອງຂອງທ່ານໄປທີ່ກະຊວງຍຸດຕິທັມແຫ່ງສະຫະຣັຖອາເມລິກາ ເພື່ອບັງຄັບໃຊ້ກົດໝາຍ. ກະຊວງຍຸດຕິທັມຈະຍື່ນຟ້ອງຄະດີແພ່ງໃນນາມຂອງ





ທ່ານ ໃນສານຊັ້ນຕົ້ນໃນເຂດເມືອງທີ່ເກີດເລື້ອງການຖືກຈຳແນກທີ່ກ່າວຫານັ້ນ. ນອກຈາກນີ້ ທ່ານຍັງສາມາດເລືອກທີ່ຈະແຊກແຊງຄະດີ ແລະວ່າຈ້າງທະນາຍຄວາມຂອງທ່ານເອງ. ທັງທ່ານຫຼືຈຳເລີຍສາມາດຮຽກຮ້ອງໃຫ້ມີການພິຈ າລະນາຄະດີໂດຍຄະນະກຳມະການຕັດສິນຄະດີໄດ້, ແລະແຕ່ລະຝ່າຍມີສິດທີ່ຈະໄປປາກົດຕົວໃນສານ, ມີທີ່ປຶກສາທາງກົດໝາຍເປັນຕົວແທນໃຫ້, ສາມາດຊັກຖາມພະຍານ, ແລະຮຽກຮ້ອງໃຫ້ມີໝາຍເກາະເພື່ອຊ່ວຍໃນການຊອກເອົາຫຼັກຖານ. ຖ້າສານຊັ້ນຕົ້ນຕັດສິນໃຫ້ທ່ານຊະນະຄະດີ, ຜູ້ພິພາກສາ ຫຼື ຄະນະກຳມະການຕັດສິນຄະດີ ສາມາດສັ່ງໃຫ້ຈຳເລີຍ:

- ຈ່າຍຊົດເຊີຍຄ່າເສັຽຫາຍຈິງໃຫ້ແກ່ທ່ານ, ລວມເຖິງ ຄ່າໃຊ້ຈ່າຍຕ່າງໆ ທີ່ທ່ານໄດ້ອອກເອງ ແລະ ຄ່າເສັຽຫາຍທາງອາລົມຈິດໃຈ
- ຈັດຫາການບັນເທົາຕາມຄຳສັ່ງໃຫ້ໂດຍຖາວອນ.
- ຈັດຫາການບັນເທົາທີ່ມີຄ່າເທົ່າກັນແລະເໝາະສົມ (ເຊັ່ນ, ຫາບ້ານວ່າງໃຫ້ທ່ານ).
- ຈ່າຍຄ່າທະນາຍຄວາມຂອງທ່ານຢ່າງສົມເຫດຜົນ.
- ຈ່າຍຄ່າເສັຽຫາຍໃຫ້ທ່ານເພື່ອເປັນການລົງໂທດ.

**ການພິຈາລະນາຕັດສິນການບໍ່ມີສາເຫດທີ່ສົມຄວນ ແລະການຍົກຟ້ອງ:** ຖ້າວ່າ HUD ພົບວ່າ ບໍ່ມີສາເຫດສົມຄວນທີ່ຈະເຊື່ອໄດ້ວ່າ ຈຳເລີຍໄດ້ລະເມີດກົດໝາຍ, ທາງ HUD ຈະຍົກຟ້ອງຄຳຮ້ອງທຸກຂອງທ່ານດ້ວຍການຕັດສິນວ່າບໍ່ມີສາເຫດທີ່ສົມຄວນ. HUD ຈະແຈ້ງໃຫ້ທ່ານ ແລະຈຳເລີຍຊາບເຖິງການຍົກຟ້ອງນັ້ນໂດຍທາງໄປສະນີ, ແລະ ທ່ານສາມາດຮ້ອງຂໍເອົາສຳເນົາຂອງລາຍງານການສືບສວນຂັ້ນສຸດທ້າຍໄດ້.

**ການພິຈາລະນາຄືນໃໝ່ກ່ຽວກັບການຕັດສິນວ່າບໍ່ມີສາເຫດທີ່ສົມຄວນ:** ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ບໍ່ໄດ້ໃຫ້ຂັ້ນຕອນໃນການອຸທອນທີ່ເປັນທາງການສຳລັບຄຳຮ້ອງທຸກທີ່ຖືກຍົກຟ້ອງໂດຍ HUD. ຢ່າງໃດກໍຕາມ, ຖ້າວ່າ ຄຳຮ້ອງທຸກຂອງທ່ານຖືກຍົກຟ້ອງດ້ວຍການຕັດສິນວ່າບໍ່ມີເຫດຜົນທີ່ສົມຄວນ, ທ່ານສາມາດສົ່ງຄຳຮ້ອງເປັນລາຍລັກອັກສອນເພື່ອຂໍໃຫ້ມີການພິຈາລະນາທົບທວນໃໝ່ ໂດຍສົ່ງໄປທີ່: Director, FHEO Office of Enforcement, U.S. Department of Housing and Urban Development, 451 7th Street, SW, Room 5206, Washington, DC 20410-2000.

## ເພີ່ມເຕີມ

**ທ່ານສາມາດຍື່ນເລື້ອງຮ້ອງຟ້ອງສ່ວນຕົວໄດ້:** ທ່ານສາມາດຍື່ນຄຳຟ້ອງໃນຄະດີແພ່ງເປັນການສ່ວນຕົວໄດ້ ໂດຍບໍ່ຕ້ອງມີການຍື່ນຄຳຮ້ອງ ທຳອິດກັບ HUD. ທ່ານຕ້ອງຍື່ນຄຳຟ້ອງຮ້ອງພາຍໃນສອງ (2) ປີ ນັບແຕ່ວັນທີຖືກຈຳແນກທີ່ກ່າວຫາຫຼ້າສຸດ.





ຖ້າວ່າ ທ່ານຍື່ນຄຳຮ້ອງທຸກກັບ HUD ແລະ ເຖິງແມ່ນວ່າ HUD ຍົກຟ້ອງຄຳຮ້ອງທຸກຂອງທ່ານ, ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ໃຫ້ສິດແກ່ທ່ານໃນການຍື່ນຟ້ອງຄະດີແພ່ງເປັນການສ່ວນຕົວ ຕ້ານກັບຈຳເລີຍໃນສານຊັ້ນຕົ້ນ. ເວລາໃນລະຫວ່າງທີ່ HUD ກຳລັງດຳເນີນ ຄະດີຮ້ອງທຸກຂອງທ່ານນັ້ນບໍ່ຖືກນັບລວມໃນໄລຍະ 2 ປີຂອງການຍື່ນຟ້ອງຄະດີ. ທ່ານຕ້ອງຍື່ນຟ້ອງຄະດີຂອງທ່ານໂດຍທ່ານເປັນ ຜູ້ອອກຄ່າໃຊ້ຈ່າຍເອງ; ຢ່າງໃດກໍຕາມ, ຖ້າວ່າ ທ່ານບໍ່ສາມາດວ່າຈ້າງທະນາຍຄວາມໄດ້, ທາງສານອາດແຕ່ງຕັ້ງທະນາຍຄົນໜຶ່ງໃຫ້ທ່ານ.

ເຖິງແມ່ນວ່າ HUD ຍັງຄົງດຳເນີນການຄຳຮ້ອງທຸກຂອງທ່ານ, ທ່ານສາມາດຍື່ນຄຳຟ້ອງຄະດີແພ່ງສ່ວນຕົວເພື່ອຟ້ອງຈຳເລີຍໄດ້, ເວັ້ນແຕ່ວ່າ (1) ທ່ານໄດ້ເຊັນຊື່ໃນຂໍ້ຕົກລົງວ່າດ້ວຍການໄກ່ເກັ່ຽຂອງ HUD ແລ້ວເພື່ອແກ້ໄຂບັນຫາຄຳຮ້ອງທຸກກັບ HUD ຂອງທ່ານ; ຫຼື (2) ຜູ້ພິພາກສາຄະດີປົກຄອງຂອງ HUD ໄດ້ເລີ້ມຕົ້ນການພິຈາລະນາຄະດີປົກຄອງສຳລັບຄຳຮ້ອງທຸກຂອງທ່ານແລ້ວ.

## ເຄື່ອງມືອື່ນໆ ເພື່ອຕໍ່ສູ້ກັບການຈຳແນກດ້ານທີ່ພັກອາໄສ:

- ຖ້າວ່າ ບໍ່ມີການປະຕິບັດຕາມຄຳສັ່ງຂອງຜູ້ພິພາກສາຄະດີປົກຄອງ, HUD ອາດຊອກຫາການບັນເທົາຊົ່ວຄາວ, ບັງຄັບໃຫ້ມີການ ປະຕິບັດຕາມຄຳສັ່ງ ຫຼື ຄວບຄຸມຍັບຍັ້ງຄຳສັ່ງໃນສານອຸທອນຂອງສະຫະຣັຖອາເມລິກາ.
- ທີ່ປຶກສາທະນາຍຄວາມ ສາມາດຍື່ນຄຳຮ້ອງຟ້ອງຄະດີໃນສານຊັ້ນຕົ້ນໄດ້ ຖ້າວ່າ ມີສາເຫດສົມຄວນທີ່ຈະເຊື່ອໄດ້ວ່າ ມີຮູບແບບ ຫຼື ການປະຕິບັດທີ່ເປັນການຈຳແນກດ້ານທີ່ພັກໄສເກີດຂຶ້ນ.



# ໝາຍເຫດ



# ໝາຍເຫດ



# ໝາຍເຫດ



# ໝາຍເຫດ

## ສຳລັບຂໍ້ມູນເພີ່ມເຕີມ

ຈຸດປະສົງຂອງເອກະສານນີ້ແມ່ນເພື່ອສະຫຼຸບສິດທິຂອງທ່ານໃນການມີບ້ານພັກອາໄສທີ່ເປັນທັມ. ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ ແລະກົດລະບຽບຂອງ HUD ບັນຈຸລາຍລະອຽດຕື່ມ ແລະຂໍ້ມູນທາງເຕັກນິກ. ຖ້າວ່າ ທ່ານຕ້ອງການສຳເນົາຂອງກົດໝາຍ ຫຼື ກົດລະບຽບ, ໃຫ້ຕິດຕໍ່ຫ້ອງການດູແລທີ່ພັກອາໄສທີ່ເປັນທັມຂອງ HUD ທີ່ຢູ່ໃກ້ທ່ານທີ່ສຸດ. ເບິ່ງລາຍຊື່ຂອງຫ້ອງການດູແລທີ່ພັກອາໄສທີ່ເປັນທັມຂອງ HUD ໃນໜ້າ 6-9.



## ເຊື່ອມຕໍ່ກັບ HUD

**Department of Housing and Urban Development**
**Room** 5204
**Washington, DC** 20410-2000

02305

HUD-1686-1-FHEO
2011

ກະຣຸນາຢ້ຽມຊົມເວັບໄຊຂອງພວກເຮົາທີ່: www.HUD.gov/fairhousing